ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ — ເລກທີ 17555 /ຍທຂ

ນະຄອນຫຼວງວຽງຈັນ, ວັນທີ 27 ກໍລະກົດ 2026

# ຂໍ້ຕົກລົງ
# ວ່າດ້ວຍການອະນຸຍາດດໍາເນີນທຸລະກິດ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ

- ອີງຕາມ ກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 32/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 677/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ຄໍາສັ່ງ ວ່າດ້ວຍ ການປັບປຸງ ວຽກງານບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດໍາເນີນທຸລະກິດ ສະບັບເລກທີ່ 03/ນຍ, ລົງວັນທີ 21 ມັງກອນ 2020;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບກອງປະຊຸມ ລັດຖະມົນຕີ-ຮອງລັດຖະມົນຕີ ຄັ້ງວັນທີ 27 ມີນາ 2026.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດ ລະບຽບການ, ວິທີການ ແລະ ຂັ້ນຕອນ ກ່ຽວກັບການອະນຸຍາດດໍາເນີນທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ເພື່ອຄຸ້ມຄອງ, ຕິດຕາມ ກວດກາ ການດໍາເນີນທຸລະກິດ ໃຫ້ມີປະສິດທິພາບ, ປະສິດທິຜົນ ແນໃສ່ຮັບປະກັນການອະນຸຍາດດໍາເນີນທຸລະກິດ ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ການອະນຸຍາດດໍາເນີນທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ**

ການອະນຸຍາດດໍາເນີນທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ແມ່ນ ການອອກອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຄື່ອນໄຫວດໍາເນີນທຸລະກິດ ທີ່ຂຶ້ນກັບຂະແໜງການໂຍທາທິການ ແລະ ຂົນສົ່ງ ໃຫ້ຖືກຕ້ອງຕາມຂະໜາດ, ປະເພດ ແລະ ຮູບການ ການລົງທຶນຂອງທຸລະກິດ ແລະ ຂອບເຂດການບໍລິການ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທຸລະກິດກ່ຽວກັບການກໍ່ສ້າງຂົວທາງ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ດ້ານການ ສຳຫຼວດ-ອອກແບບ, ບໍລິການທີ່ປຶກສາ, ວິໄຈວັດສະດຸກໍ່ສ້າງ, ຮັບເໝົາ ກໍ່ສ້າງ, ບູລະນະຮັກສາ-ສ້ອມແປງ ທາງຫຼວງ ແລະ ທຸລະກິດອື່ນທີ່ກ່ຽວຂ້ອງກັບທາງຫຼວງ;

2. **ທຸລະກິດກ່ຽວກັບເຄຫາສະຖານ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ດ້ານການ ສຳຫຼວດ-ອອກແບບ, ວິໄຈວັດສະດຸກໍ່ສ້າງ, ທີ່ປຶກສາ, ຮັບເໝົາກໍ່ສ້າງເຄຫາສະຖານ, ບູລະນະສ້ອມແປງ-ຕໍ່ເຕີມ-ຟື້ນຟູ-ປະຕິສັງຂອນ ແລະ ທຸລະກິດອື່ນກ່ຽວກັບການກໍ່ສ້າງເຄຫາສະຖານ;

3. **ທຸລະກິດກ່ຽວກັບການລົດໄຟ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ດ້ານການສຳຫຼວດ-ອອກແບບ, ບໍລິການທີ່ປຶກສາ, ວິໄຈວັດສະດຸກໍ່ສ້າງ, ຮັບເໝົາກໍ່ສ້າງ-ບູລະນະຮັກສາ-ສ້ອມແປງ ທາງລົດໄຟ, ຜະລິດ-ຕິດຕັ້ງ-ສ້ອມແປງປ້າຍ-ໄຟສັນຍານ-ເຄື່ອງໝາຍຈະລາຈອນ ທາງລົດໄຟ, ສູນແຈກຢາຍສິນຄ້າລົດໄຟ, ເຂດໂລຊິດສະຕິກລົດໄຟ, ຂາຍປີ້ລົດໄຟ-ຕົວແທນຂາຍປີ້ລົດໄຟ, ບໍລິການຂົນສົ່ງທາງລົດໄຟ, ສ້ອມແປງຫົວຈັກ-ຕູ້-ອຸປະກອນ ລົດໄຟ ແລະ ທຸລະກິດອື່ນກ່ຽວກັບການລົດໄຟ;

4. **ທຸລະກິດກ່ຽວກັບການຈະລາຈອນທາງບົກ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ສອນຂັບລົດ, ຜະລິດປ້າຍ, ໄຟສັນຍານ, ເຄື່ອງໝາຍຈະລາຈອນ ແລະ ທຸລະກິດອື່ນທີ່ກ່ຽວຂ້ອງການຈະລາຈອນທາງບົກ;

5. **ທຸລະກິດກ່ຽວກັບຂົນສົ່ງທາງບົກ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ດ້ານການ ຂົນສົ່ງຜູ້ໂດຍສານ, ສະຖານີຂົນສົ່ງໂດຍສານ, ຂາຍປີ້ລົດໂດຍສານ, ໃຫ້ເຊົ່າລົດ, ຂົນສົ່ງ-ຈັດສົ່ງສິນຄ້າ, ສະຖານີ ຂົນສົ່ງສິນຄ້າ, ສູນແຈກຢາຍສິນຄ້າ, ຄວບຄຸມ, ເກັບຮັກສາ, ຫຸ້ມຫໍ່, ຄ່ຽນຖ່າຍ, ການຈັດການ ການຂົນສົ່ງ ແລະ ທຸລະກິດອື່ນກ່ຽວກັບການຂົນສົ່ງທາງບົກ;

6. **ທຸລະກິດກ່ຽວກັບຍານພາຫະນະທາງບົກ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ດ້ານການ ນຳເຂົ້າ-ສົ່ງອອກຍານພາຫະນະ, ຜະລິດ-ປະກອບ, ສູນທົດສອບ, ສູນກວດກາເຕັກນິກ, ອູ່ສ້ອມແປງລົດ, ແລະ ທຸລະກິດອື່ນກ່ຽວກັບຍານພາຫະນະທາງບົກ;

7. **ທຸລະກິດກ່ຽວກັບການທາງນ້ຳ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ດ້ານການ ຂົນສົ່ງຜູ້ໂດຍສານ-ສິນຄ້າ, ໂລຊິດສະຕິກທາງນ້ຳ, ສຳຫຼວດ-ອອກແບບ, ບໍລິການທີ່ປຶກສາ, ວິໄຈວັດສະດຸກໍ່ສ້າງ, ຮັບເໝົາກໍ່ສ້າງ-ບູລະນະຮັກສາ-ສ້ອມແປງໂຄງລ່າງພື້ນຖານທາງນ້ຳ, ອູ່ຕໍ່ເຮືອ, ໃຫ້ເຊົ່າເຮືອ, ຂາຍປີ້-ຕົວແທນຂາຍປີ້, ຂຸດຄົ້ນວັດສະດຸກໍ່ສ້າງຕາມແມ່ນ້ຳ ແລະ ທຸລະກິດອື່ນກ່ຽວກັບການທາງນ້ຳ;

8. **ທຸລະກິດກ່ຽວກັບນ້ຳປະປາ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ດ້ານການສຳຫຼວດ-ອອກແບບ, ທີ່ປຶກສາ, ກໍ່ສ້າງ, ຕິດຕັ້ງສ້ອມແປງນ້ຳປະປາ; ທຸລະກິດບໍລິການ ດ້ານການຜະລິດ, ສະໜອງ ແລະ ບໍລິການນ້ຳປະປາ, ທຸລະກິດ ບຳບັດນ້ຳເປື້ອນ ແລະ ທຸລະກິດອື່ນທີ່ກ່ຽວກັບນ້ຳປະປາ;

9. **ທຸລະກິດກ່ຽວກັບທີ່ຢູ່ອາໄສ** ໝາຍເຖິງ ຫົວໜ່ວຍທຸລະກິດບໍລິການ ດ້ານການ ຈັດສັນ-ປຸກສ້າງ-ພັດທະນາທີ່ຢູ່ອາໄສ, ຈັດຫາ-ບໍລິການທີ່ຢູ່ອາໄສ, ຂາຍ, ເຊົ່າ-ເຊົ່າຊື້ ແລະ ທຸລະກິດອື່ນກ່ຽວກັບທີ່ຢູ່ອາໄສ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວກັບການດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ໃນ ສປປ ລາວ.

## ໝວດທີ 2
## ປະເພດທຸລະກິດການລົງທຶນທົ່ວໄປ

**ມາດຕາ 5 ປະເພດທຸລະກິດການລົງທຶນທົ່ວໄປ**

ທຸລະກິດການລົງທຶນທົ່ວໄປ ມີ ສອງ ປະເພດ ດັ່ງນີ້:

1. ທຸລະກິດໃນບັນຊີຄວບຄຸມ;
2. ທຸລະກິດບໍ່ຢູ່ໃນບັນຊີຄວບຄຸມ.

**ມາດຕາ 6 ທຸລະກິດໃນບັນຊີຄວບຄຸມ**

ທຸລະກິດໃນບັນຊີຄວບຄຸມ ແມ່ນ ປະເພດກິດຈະການ ທີ່ມີຄວາມສ່ຽງຕໍ່ ຄວາມໝັ້ນຄົງຂອງຊາດ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ, ຮີດຄອງປະເພນີອັນດີງາມຂອງຊາດ, ສັງຄົມ, ສິ່ງແວດລ້ອມ ແລະ ທຳມະຊາດ ຊຶ່ງຕ້ອງຜ່ານການພິຈາລະນາຈາກ ບັນດາກົມ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ກ່ອນການອອກໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 7 ທຸລະກິດບໍ່ຢູ່ໃນບັນຊີຄວບຄຸມ**

ທຸລະກິດບໍ່ຢູ່ໃນບັນຊີຄວບຄຸມ ແມ່ນ ບັນດາກິດຈະການເປີດກວ້າງການລົງທຶນທົ່ວໄປ ທີ່ບໍ່ມີຜົນກະທົບຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ, ສັງຄົມ, ສິ່ງແວດລ້ອມ ແລະ ທຳມະຊາດ. ຊຶ່ງໜ່ວຍງານຂອງຂະແໜງການກ່ຽວຂ້ອງທີ່ໄດ້ຮັບການແຕ່ງຕັ້ງໃນຂັ້ນກະຊວງ, ແຂວງ, ນະຄອນຫຼວງ ແລະ ເມືອງ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ສາມາດອອກໃບອະນຸຍາດດຳເນີນທຸລະກິດ ຕາມການຄົ້ນຄວ້າພິຈາລະນາຂອງຄະນະຮັບຜິດຊອບການຈັດຕັ້ງປະຕິບັດບໍລິການລົງທຶນປະຕູດຽວ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 8 ປະເພດທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ**

ທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ມີ ເກົ້າ ປະເພດ ດັ່ງນີ້:

1. ທຸລະກິດກ່ຽວກັບການກໍ່ສ້າງຂົວທາງ;
2. ທຸລະກິດກ່ຽວກັບເຄຫາສະຖານ;
3. ທຸລະກິດກ່ຽວກັບການລົດໄຟ;
4. ທຸລະກິດກ່ຽວກັບການຈະລາຈອນທາງບົກ;
5. ທຸລະກິດກ່ຽວກັບການຂົນສົ່ງທາງບົກ;
6. ທຸລະກິດກ່ຽວກັບຍານພາຫະນະທາງບົກ;
7. ທຸລະກິດກ່ຽວກັບການທາງນ້ຳ;
8. ທຸລະກິດກ່ຽວກັບນ້ຳປະປາ ແລະ ບຳບັດນ້ຳເປື້ອນ;
9. ທຸລະກິດກ່ຽວກັບທີ່ຢູ່ອາໄສ.

## ໝວດທີ 3
## ການຂໍອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ

**ມາດຕາ 9 ການຂໍອະນຸຍາດດຳເນີນທຸລະກິດໃນບັນຊີຄວບຄຸມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນທຸລະກິດໃນບັນຊີຄວບຄຸມທີ່ຂຶ້ນກັບຂະແໜງການໂຍທາທິການ ແລະ ຂົນສົ່ງ ຕ້ອງຍື່ນຄຳຮ້ອງຕາມແບບພິມຕໍ່ຈຸດບໍລິການປະຕູດຽວ ແລະ ບັນດາກົມກ່ຽວຂ້ອງ ຫຼື ຕາມປະເພດທຸລະກິດ ເພື່ອຂໍໃບອະນຸຍາດດຳເນີນທຸລະກິດ ຕາມການແບ່ງຄຸ້ມຄອງໃນແຕ່ລະໄລຍະຂອງລັດຖະບານ.

ບັນດາກົມທີ່ກ່ຽວຂ້ອງແຕ່ງຕັ້ງຄະນະຮັບຜິດຊອບການຈັດຕັ້ງປະຕິບັດບໍລິການລົງທຶນຕາມປະເພດທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ບັນດາກົມ ປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງຄົ້ນຄວ້າມີຄຳເຫັນ, ແລ້ວລາຍງານຕໍ່ ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເພື່ອຂໍທິດຊີ້ນຳກ່ອນການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 10 ການຂໍອະນຸຍາດດຳເນີນທຸລະກິດບໍ່ຢູ່ໃນບັນຊີຄວບຄຸມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ດຳເນີນທຸລະກິດບໍ່ຢູ່ໃນບັນຊີຄວບຄຸມ ຕ້ອງຍື່ນຄຳຮ້ອງຕາມແບບພິມຕໍ່ຈຸດບໍລິການປະຕູດຽວ ແລະ ບັນດາກົມກ່ຽວຂ້ອງໜ່ວຍງານຮັບຜິດຊອບ ຂັ້ນສູນກາງ, ແຂວງ ຫຼື ເມືອງ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຕາມຂະໜາດ, ປະເພດ ແລະ ຮູບການລົງທຶນຂອງທຸລະກິດ.

ບັນດາກົມກ່ຽວຂ້ອງໜ່ວຍງານຮັບຜິດຊອບ ຂັ້ນສູນກາງ, ແຂວງ ຫຼື ເມືອງ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ສາມາດອອກໃບອະນຸຍາດດຳເນີນທຸລະກິດ ຕາມການຄົ້ນຄວ້າພິຈາລະນາຂອງຄະນະວິຊາການຂອງຕົນ.

**ມາດຕາ 11 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ**

ການຂໍອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີບຸກຄະລາກອນ ທີ່ມີຄວາມຮູ້ ຄວາມສາມາດ ແລະ ປະສົບການທີ່ເໝາະສົມ ກັບປະເພດທຸລະກິດຂອງຕົນ;
3. ມີສຳນັກງານ ຫຼື ສິ່ງປຸກສ້າງ, ວັດຖຸອຸປະກອນ ແລະ ພາຫະນະ ຮັບໃຊ້ ທີ່ເໝາະສົມກັບປະເພດທຸລະກິດຂອງຕົນ;
4. ມີທຶນທີ່ເໝາະສົມກັບແຕ່ລະປະເພດ ແລະ ຂະໜາດຂອງກິດຈະການ;
5. ມີເງື່ອນໄຂອື່ນ ຕາມແຕ່ລະປະເພດຂອງທຸລະກິດ.

**ມາດຕາ 12 ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດ**

ການຂໍອະນຸຍາດດຳເນີນທຸລະກິດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດດຳເນີນທຸລະກິດ ຕາມແບບພິມ;
2. ສຳເນົາ ບັດປະຈຳຕົວ, ສຳມະໂນຄົວ ຫຼື ໜັງສືຜ່ານແດນ ຂອງຜູ້ຂໍອະນຸຍາດ;
3. ສຳເນົາໃບທະບຽນວິສາຫະກິດ;
4. ແຜນດຳເນີນທຸລະກິດ, ການຜະລິດ ຫຼື ບໍລິການ;
5. ໃບຢັ້ງຢືນຖານະການເງິນ ຫຼື ເອກະສານສະໜັບສະໜູນຈາກສະຖາບັນການເງິນ;
6. ຮູບຜູ້ຂໍອະນຸຍາດ 3x4 ຈຳນວນ 02 ໃບ;
7. ເອກະສານອື່ນ ຕາມຄວາມຈຳເປັນ.

ສຳລັບ ແຜນດຳນເນີນທຸລະກິດ ໄດ້ກຳນົດໄວ້ໃນແບບພິມຕ່າງຫາກ.

**ມາດຕາ 13 ການຕໍ່ໃບອະນຸຍາດດຳເນີນທຸລະກິດໃນບັນຊີຄວບຄຸມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຕໍ່ໃບອະນຸຍາດດຳເນີນທຸລະກິດໃນບັນຊີ ຄວບຄຸມ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ແລ້ວຍື່ນຕໍ່ຈຸດບໍລິການປະຕູດຽວ ແລະ ກົມກ່ຽວຂ້ອງກັບປະເພດທຸລະກິດ ຂັ້ນສູນກາງ ກ່ອນໃບອະນຸຍາດດຳເນີນທຸລະກິດໝົດອາຍຸ.

ກໍລະນີ ໃບອະນຸຍາດດຳເນີນທຸລະກິດ ໝົດອາຍຸກາຍ 06 ເດືອນ ຈະຖືກປັບໃໝສອງເທົ່າ ຂອງຄ່າທຳນຽມ ແລະ ບໍລິການ.

ກໍລະນີ ໃບອະນຸຍາດດຳເນີນທຸລະກິດ ໝົດອາຍຸກາຍ 12 ເດືອນ ຈະຖືກປັບໃໝສີ່ເທົ່າ ຂອງຄ່າທຳນຽມ ແລະ ບໍລິການ ພ້ອມທັງປະກອບເອກະສານຄືນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 14 ການຕໍ່ໃບອະນຸຍາດດຳເນີນທຸລະກິດໃນບັນຊີບໍ່ຄວບຄຸມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຕໍ່ໃບອະນຸຍາດດຳເນີນທຸລະກິດໃນບັນຊີບໍ່ຄວບຄຸມ ຕ້ອງປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 16 ຂອງຂໍ້ຕົກລົງສະບັບນີ້ ແລ້ວຍື່ນຕໍ່ຈຸດບໍລິການປະຕູດຽວ ແລະ ກົມກ່ຽວຂ້ອງກັບປະເພດທຸລະກິດ ຂັ້ນສູນກາງ, ແຂວງ ແລະ ເມືອງ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ກ່ອນໃບອະນຸຍາດດຳເນີນທຸລະກິດໝົດອາຍຸ.

ກໍລະນີ ໃບອະນຸຍາດດຳເນີນທຸລະກິດ ໝົດອາຍຸກາຍ 06 ເດືອນ ຈະຖືກປັບໃໝສອງເທົ່າ ຂອງ ຄ່າທຳນຽມ ແລະ ບໍລິການ.

ກໍລະນີ ໃບອະນຸຍາດດຳເນີນທຸລະກິດ ໝົດອາຍຸກາຍ 12 ເດືອນ ຈະຖືກປັບໃໝສີ່ເທົ່າ ຂອງ ຄ່າທຳນຽມ ແລະ ບໍລິການ ພ້ອມທັງປະກອບເອກະສານຄືນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງ ຂໍ້ຕົກລົງສະບັບນີ້.

**ມາດຕາ 15 ເງື່ອນໄຂຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດ**

ການຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ດໍາເນີນທຸລະກິດຖືກຕ້ອງ ຕາມປະເພດກິດຈະການຂອງໃບອະນຸຍາດດໍາເນີນທຸລະກິດ;
2. ມອບພັນທະອາກອນຢ່າງເປັນປົກກະຕິ;
3. ດໍາເນີນທຸລະກິດບໍ່ສ້າງຜົນກະທົບຮ້າຍແຮງຕໍ່ ຄວາມໝັ້ນຄົງຂອງຊາດ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຮີດຄອງປະເພນີອັນດີງາມຂອງຊາດ, ສັງຄົມ, ສິ່ງແວດລ້ອມ ແລະ ທໍາມະຊາດ.

**ມາດຕາ 16 ເອກະສານປະກອບຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດ**

ການຂໍອະນຸຍາດຕໍ່ໃບອະນຸຍາດດໍາເນີນທຸລະກິດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດ ຕາມແບບພິມ;
2. ໃບອະນຸຍາດດໍາເນີນທຸລະກິດ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ (ສະບັບຕົ້ນ);
3. ສໍາເນົາໃບທະບຽນວິສາຫະກິດ;
4. ໃບຢັ້ງຢືນການມອບພັນທະອາກອນ ແລະ ບົດສະຫຼຸບບັນຊີປະຈໍາປີ;
5. ສໍາເນົາ ບັດປະຈໍາຕົວ, ສໍາມະໂນຄົວ ຫຼື ໜັງສືຜ່ານແດນ;
6. ບົດປະເມີນການຈັດຕັ້ງປະຕິບັດການດໍາເນີນທຸລະກິດໄລຍະ 01 ປີ ຜ່ານມາ;
7. ຮູບຜູ້ຂໍອະນຸຍາດ 3x4 ຈໍານວນ 02 ໃບ;
8. ໃບຢັ້ງຢືນ ການນໍາທຶນຈາກຕ່າງປະເທດ ເພື່ອມາດໍາເນີນທຸລະກິດ ຢູ່ ສປປ ລາວ (ສໍາລັບ ນັກລົງທຶນຕ່າງປະເທດ);
9. ເອກະສານອື່ນ ຕາມຄວາມຈໍາເປັນ;

ກໍລະນີການຂໍຕໍ່ໃບອະນຸຍາດດໍາເນີນທຸລະກິດ ທີ່ຢູ່ໃນບັນຊີຄວບຄຸມ ແມ່ນຕ້ອງໄດ້ກວດເບິ່ງ ອາຍຸຂອງໃບອະນຸຍາດລົງທຶນ ທີ່ຂະແໜງການລົງທຶນທີ່ອະນຸຍາດ, ພ້ອມທັງປະກອບເອກະສານຂ້າງເທິງ ຂໍ້ 1-ຂໍ້ 9.

**ມາດຕາ 17 ການຂໍອະນຸຍາດປ່ຽນແປງເນື້ອໃນໃບອະນຸຍາດດໍາເນີນທຸລະກິດ**

ວິສາຫະກິດ ທີ່ມີຈຸດປະສົງ ຂໍປ່ຽນແປງເນື້ອໃນໃບອະນຸຍາດດໍາເນີນທຸລະກິດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍປ່ຽນແປງເນື້ອໃນໃບອະນຸຍາດດໍາເນີນທຸລະກິດ ຕາມແບບພິມ;
2. ໃບອະນຸຍາດດໍາເນີນທຸລະກິດ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ (ສະບັບຕົ້ນ);
3. ສໍາເນົາໃບທະບຽນວິສາຫະກິດ (ສະບັບປ່ຽນແປງເນື້ອໃນຈາກ ຂະແໜງການອຸດສາຫະກໍາ ແລະ ການຄ້າ);
4. ສໍາເນົາ ບັດປະຈໍາຕົວ, ສໍາມະໂນຄົວ ຫຼື ໜັງສືຜ່ານແດນ;
5. ຮູບຜູ້ຂໍອະນຸຍາດ 3x4 ຈໍານວນ 02 ໃບ;
6. ເອກະສານອື່ນ ຕາມຄວາມຈໍາເປັນ.

ກໍລະນີການຂໍປ່ຽນແປງເນື້ອໃນໃບອະນຸຍາດດໍາເນີນທຸລະກິດ ທີ່ຢູ່ໃນບັນຊີຄວບຄຸມ ແມ່ນຕ້ອງໄດ້ກວດເບິ່ງ ອາຍຸຂອງໃບອະນຸຍາດລົງທຶນ ທີ່ຂະແໜງການລົງທຶນທີ່ອະນຸຍາດ, ພ້ອມທັງປະກອບເອກະສານຂ້າງເທິງ ຂໍ້ 1-ຂໍ້ 6.

**ມາດຕາ 18 ການຂໍຍຸບເລີກ ຫຼື ຢຸດເຊົາການດໍາເນີນທຸລະກິດ**

ວິສາຫະກິດ ທີ່ມີຈຸດປະສົງ ຂໍຍຸບເລີກ ຫຼື ຢຸດເຊົາການດໍາເນີນທຸລະກິດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍຍຸບເລີກ ຫຼື ຢຸດເຊົາການດໍາເນີນທຸລະກິດ ຕາມແບບພິມ;
2. ໃບອະນຸຍາດດໍາເນີນທຸລະກິດ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ (ສະບັບຕົ້ນ);
3. ໜັງສືແຈ້ງຢຸດເຊົາຈາກໜ່ວຍງານສ່ວຍສາອາກອນ;

4. ໜັງສືແຈ້ງປຸດເຊົາຈາກໜ່ວຍງານອຸດສາຫະກຳ ແລະ ການຄ້າ;

5. ເອກະສານອື່ນ ຕາມຄວາມຈຳເປັນ.

## ໝວດທີ 4
## ການອອກໃບອະນຸຍາດດຳເນີນທຸລະກິດ

**ມາດຕາ 19 ກຳນົດເວລາພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດໃນບັນຊີຄວບຄຸມ**

ການກຳນົດເວລາພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດໃນບັນຊີຄວບຄຸມ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ດຳເນີນທຸລະກິດ ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ພາຍໃນ 15 ວັນລັດຖະການ ນັບແຕ່ວັນຂະແໜງການກ່ຽວຂ້ອງ ໄດ້ຮັບຄຳຮ້ອງຄົບຖ້ວນ;

2. ກົມ, ພະແນກ ຫຼື ໜ່ວຍງານ ທີ່ກ່ຽວຂ້ອງຮັບເອກະສານ ແລະ ມີຄຳເຫັນ ພາຍໃນ 02 ວັນລັດຖະການ ພາຍຫຼັງໄດ້ເອກະສານທີ່ຄົບຖ້ວນ;

3. ກົມ, ພະແນກ ຫຼື ໜ່ວຍງານ ທີ່ກ່ຽວຂ້ອງ ຄົ້ນຄວ້າມີຄຳເຫັນ, ພິຈາລະນາ (ລົງລາຍເຊັນ) ອອກອະນຸຍາດດຳເນີນທຸລະກິດ ແລະ ນຳສົ່ງໃຫ້ຫ້ອງການ ພາຍໃນ 05 ວັນລັດຖະການ;

4. ພາຍຫຼັງມີຄຳເຫັນດີຈາກ ກົມ, ພະແນກ ຫຼື ໜ່ວຍງານຄຸ້ມຄອງ, ຄະນະຮັບຜິດຊອບຂອງບັນດາກົມທີ່ກ່ຽວຂ້ອງ ຕ້ອງລາຍງານຕໍ່ ທ່ານລັດຖະມົນຕີ ກະຊວງໂຍທາ ທິການ ແລະ ຂົນສົ່ງ ມີທິດຊີ້ນຳ ພາຍໃນ 05 ວັນລັດຖະການ;

5. ພາຍຫຼັງ ທ່ານ ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ມີທິດຊີ້ນຳເຫັນດີແລ້ວ ກົມທີ່ກ່ຽວຂ້ອງ ອອກໃບອະນຸຍາດດຳເນີນທຸລະກິດ ພາຍໃນ 03 ວັນລັດຖະການ.

ໃນກໍລະນີ ຄຳຮ້ອງບໍ່ໄດ້ຮັບການເຫັນດີ ກົມກ່ຽວຂ້ອງ ແຈ້ງຕອບເປັນລາຍລັກອັກສອນສົ່ງໃຫ້ຫ້ອງການເພື່ອແຈ້ງໃຫ້ຜູ້ດຳເນີນທຸລະກິດຊາບ ພາຍໃນ 03 ວັນລັດຖະການ.

**ມາດຕາ 20 ກຳນົດເວລາພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍ່ຢູ່ໃນບັນຊີຄວບຄຸມ**

ໜ່ວຍງານລົງທຶນປະຕູດຽວ ຂັ້ນກະຊວງ, ແຂວງ, ນະຄອນຫຼວງ ແລະ ຫ້ອງການ ຍທຂ ເມືອງ ສາມາດພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດບໍ່ຢູ່ໃນບັນຊີຄວບຄຸມພາຍໃນ 05 ວັນ ລັດຖະການ ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ.

**ມາດຕາ 21 ການແຈ້ງ ເສຍຫາຍ ຫຼື ສູນຫາຍ ໃບອະນຸຍາດດຳເນີນທຸລະກິດ**

ໃນກໍລະນີໃບອະນຸຍາດດຳເນີນທຸລະກິດ ເສຍຫາຍ (ເປິເປື້ອນ, ຈີກຂາດ) ຫຼື ສູນຫາຍ ຜູ້ດຳເນີນທຸລະກິດ ຕ້ອງແຈ້ງ ແລະ ປະກອບຄຳຮ້ອງຕາມແບບພິມ ຍື່ນຕໍ່ຈຸດບໍລິການປະຕູດຽວ ແລະ ພາກສ່ວນກ່ຽວຂ້ອງ ຂັ້ນສູນກາງ, ແຂວງ ແລະ ເມືອງ ພາຍໃນ 30 ວັນລັດຖະການ ແລະ ເສຍຄ່າທຳນຽມ, ຄ່າບໍລິການ ຕາມລະບຽບການ.

## ໝວດທີ 5
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 22 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ໃນການອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ມີດັ່ງນີ້:

1. ອອກໃບອະນຸຍາດດຳເນີນທຸລະກິດ;
2. ຕໍ່ໃບອະນຸຍາດດຳເນີນທຸລະກິດ;
3. ປ່ຽນແປງເນື້ອໃນໃບອະນຸຍາດດຳເນີນທຸລະກິດ;
4. ຄົ້ນຄວ້າປະກອບຄຳເຫັນຕໍ່ເອກະສານດ້ານວິຊາສະເພາະຕໍ່ເອກະສານຕ່າງໆ.

**ມາດຕາ 23 ການເກັບຄ່າທຳນຽມ ແລະ ຄ່າບໍລິການ**

ການເກັບຄ່າທຳນຽມ ແລະ ຄ່າບໍລິການ ການອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ໃຫ້ປະຕິບັດຕາມ ລັດຖະບັນຍັດຂອງປະທານປະເທດ ທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 24 ການຄຸ້ມຄອງນຳໃຊ້ລາຍຮັບຂອງຄ່າບໍລິການ**

ການຄຸ້ມຄອງນຳໃຊ້ງົບປະມານຂອງຄ່າບໍລິການ ແຕ່ລະພາກສ່ວນ ຈະຕ້ອງປະຕິບັດດັ່ງນີ້:

1. ສ້າງແຜນນຳໃຊ້ລາຍຮັບຂອງຄ່າບໍລິການ ທີ່ຕິດພັນກັບການ ຄຸ້ມຄອງ ແລະ ກວດກາ ວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງຕົນໃຫ້ຖືກຕ້ອງຕາມຂໍ້ຕົກລົງ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ, ການປະຢັດ ແລະ ຕ້ານການຟຸມເຟືອຍ, ເລກທີ 0200/ກງ, ລົງວັນທີ 25 ມັງກອນ 2023 ແລະ ເລກທີ 0012/ກງ, ລົງວັນທີ 03 ມັງກອນ 2025;
2. ການຈ່າຍເງິນອັດຕາກິນ, ຄ່າພັກເຊົາ, ຄ່າເດີນທາງ ແລະ ຄ່າໃຊ້ຈ່າຍອື່ນໆ ຕ້ອງມີຂໍ້ຕົກລົງຂອງ ຂັ້ນເທິງ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 25 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ໂດຍບໍ່ໄດ້ຮັບອະນຸຍາດ;
2. ປອມແປງໃບອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;
3. ປອມແປງເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;
4. ຂັດຂວາງ, ບໍ່ອຳນວຍຄວາມສະດວກ, ບໍ່ໃຫ້ຄວາມຮ່ວມມື ໃນການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 26 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມ ຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ຂາຍ, ເຊົ່າ ໃບອະນຸຍາດດຳເນີນທຸລະກິດຂອງຕົນໃຫ້ຜູ້ອື່ນ;
2. ດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງຕາມປະເພດຂອງທຸລະກິດທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ໂດຍບໍ່ມີໃບອະນຸຍາດ ຫຼື ໃບອະນຸຍາດໝົດອາຍຸ;
4. ສົມຮູ້ຮ່ວມຄິດ ຫຼື ໃຫ້ສິນບົນ ແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງຂອງລັດ;
5. ປິດບັງ, ປອມແປງ, ບິດເບືອນ ແລະ ທຳລາຍຂໍ້ມູນ ກ່ຽວກັບການດຳເນີນທຸລະກິດ ຂອງຕົນ;
6. ບໍ່ໃຫ້ຄວາມຮ່ວມມື, ໝິ່ນປະໝາດ, ນາບຂູ່, ທຳຮ້າຍຮ່າງກາຍ ເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 27 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບທາງລັດຖະການ;

2. ສົມຮູ້ຮ່ວມຄິດ, ທວງເອົາ, ຂໍເອົາ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ກົດໜ່ວງ, ຖ່ວງດຶງ, ເປີດເຜີຍ, ປອມແປງເອກະສານ ແລະ ຂໍ້ມູນ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ ແລະ ພັກພວກ;

3. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງ ຂອງຜູ້ດຳເນີນທຸລະກິດ;

4. ໝິ່ນປະໝາດ, ໃຊ້ວາຈາ ທ່າທີບໍ່ສຸພາບ ແລະ ນາບຂູ່ ຜູ້ດຳເນີນທຸລະກິດ;

5. ອອກໃບອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ບໍ່ຖືກຕ້ອງຕາມ ຂະໜາດ, ປະເພດ ແລະ ຮູບການການລົງທຶນຂອງທຸລະກິດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ການຄຸ້ມຄອງ ແລະ ກວດກາ ວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ

**ມາດຕາ 28 ອົງການຄຸ້ມຄອງ ແລະ ກວດກາ ວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ**

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄຸ້ມຄອງວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ ຢ່າງລວມສູນ ປະກອບດ້ວຍ:

1. ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ບັນດາກົມ ທີ່ກ່ຽວຂ້ອງ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ;
3. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
4. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງບັນດາກົມທີ່ກ່ຽວຂ້ອງ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງ ແລະ ກວດກາ ວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຂອງບັນດາກົມ ທີ່ກ່ຽວຂ້ອງ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບຽບການ, ຄຳແນະນຳ ກ່ຽວກັບການຄຸ້ມຄອງ ຕິດຕາມ ການເຄື່ອນໄຫວທຸລະກິດ ຂອງບັນດາຫົວໜ່ວຍທຸລະກິດ ທີ່ໄດ້ອອກອະນຸຍາດດຳເນີນທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;

2. ຄົ້ນຄວ້າ ແລະ ພິຈາລະນາ (ລົງລາຍເຊັນ) ອອກອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ໜັງສືຮັບຮອງຜູ້ຈັດການ (ຖ້າມີ) ແລ້ວນຳສົ່ງໃຫ້ຫ້ອງການ ຕາມກຳນົດເວລາທີ່ໄດ້ລະບຸໄວ້ໃນ ມາດຕາທີ 19;

3. ອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ ລັດວິສາຫະກິດ, ວິສາຫະກິດພາຍໃນ ຂະໜາດໃຫຍ່ ທີ່ມີມູນຄ່າທຶນຈົດທະບຽນ ຫຼາຍກວ່າ ເຈັດຕື້ສອງຮ້ອຍລ້ານກີບ, ການລົງທຶນຮ່ວມກັບຕ່າງປະເທດ, ການລົງທຶນຂອງຕ່າງປະເທດ ຮ້ອຍສ່ວນຮ້ອຍ (100%) ແລະ ທຸລະກິດໃນບັນຊີຄວບຄຸມ;

4. ຄົ້ນຄວ້າ, ປັບປຸງວຽກງານລົງທຶນ ຂອງບັນດາຫົວໜ່ວຍທຸລະກິດ ທີ່ຂຶ້ນກັບຂະແໜງການໂຍທາທິການ ແລະ ຂົນສົ່ງ ເພື່ອທັນເປັນທັນສະໄໝ, ສະດວກ, ວ່ອງໄວ, ໂປ່ງໃສ ແລະ ກວດສອບໄດ້;

5. ຕິດຕາມ ກວດກາ ແລະ ປະເມີນຜົນ ການດຳເນີນທຸລະກິດ ຂອງບັນດາຫົວໜ່ວຍທຸລະກິດ ໃນແຕ່ລະໄລຍະ ແລະ ທຸລະກິດທີ່ເຄື່ອນໄຫວບໍ່ສອດຄ່ອງກັບລະບຽບການທີ່ກ່ຽວຂ້ອງ;

6. ອອກໃບແຈ້ງເຕືອນ, ໂຈະ, ຢຸດຊົ່ວຄາວ, ຖອນໃບອະນຸຍາດດຳເນີນທຸລະກິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍໄດ້ຮັບການເຫັນດີຈາກ ທ່ານລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ;

7. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບການອອກອະນຸຍາດດຳເນີນທຸລະກິດ;

8. ປະເມີນ, ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອອກອະນຸຍາດດຳເນີນທຸລະກິດໃຫ້ຄະນະນຳກະຊວງ ໂດຍຜ່ານຫ້ອງການ ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ ຢ່າງເປັນປົກກະຕິ;

9. ສຳລັບ ການຂໍອອກອະນຸຍາດດຳເນີນທຸລະກິດ ຂະແໜງການລົດໄຟ ແມ່ນ ສາມາດອອກອະນຸຍາດໄດ້ຢູ່ຂັ້ນສູນກາງເທົ່ານັ້ນ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 30 ສິດ ແລະ ໜ້າທີ່ ຂອງຫ້ອງການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບຽບການ, ຄຳແນະນຳ, ຕິດຕາມກວດກາເອກະສານ, ກ່ຽວກັບການຄຸ້ມຄອງ, ການເຄື່ອນໄຫວທຸລະກິດ ຂອງບັນດາຫົວໜ່ວຍທຸລະກິດ ທີ່ໄດ້ອອກອະນຸຍາດດຳເນີນທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;

2. ກວດກາຄວາມຖືກຕ້ອງ, ຄົບຖ້ວນຂອງເອກະສານ ແລະ ປະກອບຄຳເຫັນ ຕໍ່ກັບການສະເໜີຂໍອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;

3. ເຂົ້າຮ່ວມ ພິຈາລະນາ ແລະ ມີຄຳເຫັນ ຕໍ່ການໂຈະ, ຢຸດຊົ່ວຄາວ, ຖອນໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;

4. ຄົ້ນຄວ້າ, ປັບປຸງວຽກງານລົງທຶນ ຂອງບັນດາຫົວໜ່ວຍທຸລະກິດ ທີ່ຂຶ້ນກັບຂະແໜງການໂຍທາທິການ ແລະ ຂົນສົ່ງ ທົ່ວປະເທດ ໃນແຕ່ລະໄລຍະ ເພື່ອຫັນເປັນທັນສະໄໝ, ສະດວກ, ວ່ອງໄວ, ໂປ່ງໃສ ແລະ ກວດສອບໄດ້;

5. ສັງລວມຂໍ້ມູນ ການດຳເນີນທຸລະກິດ ຂອງບັນດາວິສາຫະກິດ ທີ່ໄດ້ອອກອະນຸຍາດດຳເນີນທຸລະກິດ ຕາມຂະໜາດ, ປະເພດ ແລະ ຮູບການ ການລົງທຶນ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;

6. ເປັນຈຸດບໍລິການ ແລະ ປະສານງານປະຕູດຽວ (ເຂົ້າ-ອອກ ຂອງເອກະສານ);

7. ເຂົ້າຮ່ວມກອງປະຊຸມ, ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງໃນການອອກອະນຸຍາດດຳເນີນທຸລະກິດ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ, ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ລະບຽບການ ແລະ ຄຳແນະນຳ ກ່ຽວກັບການອະນຸຍາດດຳເນີນທຸລະກິດ;

2. ອອກໃບອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ໃຫ້ ວິສາຫະກິດ, ຂະໜາດກາງ ທີ່ມີມູນຄ່າທຶນຈົດທະບຽນ ຫຼາຍກ່ວາ ສອງຮ້ອຍສີ່ສິບລ້ານ ຫາ ເຈັດຕື້ສອງຮ້ອຍລ້ານກີບ;

3. ຕິດຕາມ ກວດກາ ແລະ ປະເມີນຜົນ ການດຳເນີນທຸລະກິດ ຂອງບັນດາວິສາຫະກິດ ໃນແຕ່ລະໄລຍະ;

4. ອອກໃບແຈ້ງເຕືອນ, ໂຈະ, ຢຸດຊົ່ວຄາວ, ຖອນໃບອະນຸຍາດດຳເນີນທຸລະກິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ປະສານສົມທົບກັບພະແນກການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງກັບການອອກອະນຸຍາດດຳເນີນທຸລະກິດ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອອກອະນຸຍາດດຳເນີນທຸລະກິດໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ, ຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ແຕ່ລະໄລຍະ ຢ່າງເປັນປົກກະຕິ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ລະບຽບການ ແລະ ຄຳແນະນຳ ກ່ຽວກັບການອະນຸຍາດດຳເນີນທຸລະກິດ;
2. ອອກໃບອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ພາຍໃນ ເມືອງ, ນະຄອນ, ຂອງຕົນໃຫ້ ຈຸລະວິສາຫະກິດ ພາຍໃນ ທີ່ມີມູນຄ່າທຶນຈົດທະບຽນ ບໍ່ເກີນສອງຮ້ອຍສີ່ສິບລ້ານກີບ;
3. ຕິດຕາມ ກວດກາ ແລະ ປະເມີນຜົນ ການດຳເນີນທຸລະກິດ ຂອງບັນດາວິສາຫະກິດ ໃນແຕ່ລະໄລຍະ;
4. ອອກໃບແຈ້ງເຕືອນ, ໂຈະ, ຢຸດຊົ່ວຄາວ, ຖອນໃບອະນຸຍາດດຳເນີນທຸລະກິດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ປະສານສົມທົບກັບຫ້ອງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບການອອກອະນຸຍາດດຳເນີນທຸລະກິດ;
6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານອອກອະນຸຍາດດຳເນີນທຸລະກິດໃຫ້ ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງ, ແຂວງ, ຄະນະກຳມະການປົກຄອງ ເມືອງ, ນະຄອນ ໃນແຕ່ລະໄລຍະຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງມີ ສິດ ແລະ ໜ້າທີ່ ປະສານສົມທົບ, ໃຫ້ການຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 34 ເນື້ອໃນກວດກາ**

ການກວດກາວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ມີເນື້ອໃນ ດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດ ລະບຽບການ ແລະ ຄຳແນະນຳ ກ່ຽວກັບ ການອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;
2. ກວດກາການເຄື່ອນໄຫວກ່ຽວກັບການດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ;
3. ການນຳໃຊ້ມາດຕະການຕໍ່ຜູ້ລະເມີດ;
4. ເນື້ອໃນອື່ນທີ່ຈຳເປັນ.

**ມາດຕາ 35 ຮູບການການກວດກາ**

ການກວດກາວຽກງານອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ມີສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ໂດຍແຈ້ງໃຫ້ ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍທີ່ບໍ່ໄດ້ແຈ້ງໃຫ້ ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາໃຫ້ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

# ໝວດທີ 8
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ**

ຜູ້ດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການຈັດຕັ້ງເຄື່ອນໄຫວດຳເນີນທຸລະກິດທີ່ໄດ້ຮັບອະນຸຍາດ ຖືກຕ້ອງຕາມ ຂະໜາດ, ປະເພດ ແລະ ຮູບການການລົງທຶນຂອງທຸລະກິດ ແລະ ຂອບເຂດການບໍລິການ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ**

ຜູ້ດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກແຈ້ງການ, ສັ່ງໂຈະ ຫຼື ຢຸດຊົ່ວຄາວການດຳເນີນທຸລະກິດ, ຖອນໃບອະນຸຍາດ ຕາມແຕ່ກໍລະນີທີ່ລະເມີດເບົາ ຫຼື ໜັກ.

**ມາດຕາ 38 ແຈ້ງເຕືອນ**

ວິສາຫະກິດ ທີ່ເຄື່ອນໄຫວບໍ່ສອດຄ່ອງກັບລະບຽບການ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ສ້າງຄວາມເສຍຫາຍຕໍ່ ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທີ່ມີລັກສະນະເບົາ ໜ່ວຍງານລົງທຶນປະຕູດຽວຂັ້ນສູນກາງ, ແຂວງ, ເມືອງ ຈະອອກໜັງສືແຈ້ງເຕືອນ ໃຫ້ປັບປຸງຕາມຄຳແນະນຳ ພາຍໃນ 20 ວັນລັດຖະການ.

ວິສາຫະກິດ ທີ່ໄດ້ສຳເລັດການປັບປຸງ ໃຫ້ຍື່ນຄຳຮ້ອງຕາມແບບພິມຕໍ່ໜ່ວຍງານລົງທຶນປະຕູດຽວ ຂັ້ນສູນກາງ, ແຂວງ, ເມືອງ ເພື່ອກວດກາ, ພິຈາລະນາ ອອກໜັງສືຢັ້ງຢືນ ພາຍໃນ 05 ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ.

**ມາດຕາ 39 ໂຈະ, ຢຸດຊົ່ວຄາວ**

ວິສາຫະກິດ ທີ່ເຄື່ອນໄຫວບໍ່ສອດຄ່ອງກັບລະບຽບການ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ, ບັນດາຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ, ແຂວງ, ເມືອງ ຈະອອກໜັງສືໂຈະ, ຢຸດຊົ່ວຄາວ ໄລຍະ 03 ເດືອນ ຕາມກໍລະນີ ດັ່ງນີ້:

1. ບໍ່ປະຕິບັດຕາມແຈ້ງເຕືອນຂອງ ໜ່ວຍງານລົງທຶນປະຕູດຽວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 37 ຂອງຂໍ້ຕົກລົງສະບັບນີ້;
2. ການກະທຳຜິດ ແລະ ສ້າງຄວາມເສຍຫາຍຕໍ່ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ທີ່ມີລັກສະນະປານກາງ.

ວິສາຫະກິດ ທີ່ໄດ້ປັບປຸງໃຫ້ຍື່ນຄຳຮ້ອງຕາມແບບພິມຕໍ່ໜ່ວຍງານລົງທຶນປະຕູດຽວ ຂັ້ນສູນກາງ, ແຂວງ ເມືອງ ເພື່ອກວດກາ, ພິຈາລະນາ ອອກໜັງສືຢັ້ງຢືນ ພາຍໃນ 15 ວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ.

**ມາດຕາ 40 ຖອນໃບອະນຸຍາດ**

ວິສາຫະກິດ ທີ່ເຄື່ອນໄຫວບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ທີ່ເຄີຍຖືກ ໂຈະ, ຢຸດຊົ່ວຄາວມາແລ້ວ ຈະຖືກຖອນໃບອະນຸຍາດ ຕາມກໍລະນີ ດັ່ງນີ້:

1. ສ້າງຄວາມເສຍຫາຍ ລະດັບຮ້າຍແຮງຕໍ່ ຄວາມໝັ້ນຄົງຂອງຊາດ, ສ້າງຄວາມເສຍຫາຍ ຕໍ່ ເສດຖະກິດ ສັງຄົມ ແລະ ສິ່ງແວດລ້ອມ;
2. ຖືກສັ່ງໂຈະ ຢຸດຊົ່ວຄາວ ແລ້ວ ບໍ່ປັບປຸງຕາມການແນະນຳ;
3. ຖືກສານຕັດສິນລົ້ມລະລາຍ.

ສຳລັບວິສາຫະກິດ ທີ່ຖືກຖອນໃບອະນຸຍາດ ແມ່ນບໍ່ສາມາດສະເໜີຂໍອະນຸຍາດດຳເນີນທຸລະກິດ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຄືນໃໝ່.

# ໝວດທີ 9
# ບົດບັນຍັດສຸດທ້າຍ

**ມາດຕາ 41 ການຈັດຕັ້ງປະຕິບັດ**

ມອບໃຫ້ຫ້ອງການ, ບັນດາກົມ ແລະ ຂະແໜງການ ຍທຂ ທັງສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

ຫ້ອງການ, ບັນດາກົມ, ສະຖາບັນ, ກອງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 42 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍລະບຽບການຄຸ້ມຄອງການອະນຸຍາດດຳເນີນທຸລະກິດ ໃນຂະແໜງການໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ 14807/ຍທຂ, ລົງວັນທີ 25 ມິຖຸນາ 2025

**ລັດຖະມົນຕີ**

ກະຊວງໂຍທາທິການ ແລະ ຂົນສົ່ງ

ເຫລັກໄຫລ ສີວິໄລ